**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເມືອງປາກງື່ມ

ວັນທີ ২8 ຕຸລາ **2024**

# ແຜນການສະເຫຼີມສະຫຼອງ
# ວັນສ້າງຕັ້ງ ເມືອງປາກງື່ມ ຄົບຮອບ 30 ປີ (30/12/1994 – 30/12/2024)

- **ອີງຕາມ**: ມະຕິຕົກລົງ ວ່າດ້ວຍການຮັບຮອງເອົາການສະເຫຼີມສະຫຼອງ ວັນສ້າງຕັ້ງເມືອງປາກງື່ມ ຄົບຮອບ **30** ປີ (**30/12/1994 – 30/12/2024**), ສະບັບເລກທີ **663**/ຄພ.ປງ, ລົງວັນທີ **28** ຕຸລາ **2024;**
- **ອີງຕາມ**: ຂໍ້ຕົກລົງວ່າດ້ວຍຄະນະຮັບຜິດຊອບກະກຽມ ແລະ ສະເຫຼີມສະຫຼອງວັນສ້າງຕັ້ງເມືອງ ຄົບຮອບ **30** ປີ, ສະບັບບເລກທີ **486**/ຈມ.ປງ, ລົງວັນທີ **29/10/2024;**
- **ອີງຕາມ**: ກອງປະຊຸມຄະນະກຳມະການສະເຫຼີມສະຫຼອງເມືອງປາກງື່ມ ຄົບບຮອບ **30** ປີ (**30** ທັນວາ **1994 – 30** ທັນວາ **2024**), ຄັ້ງວັນທີ **16** ຕຸລາ **2024.**

**ຄະນະກຳມະການຮັບຜິດຊອບສະເຫຼີມສະຫຼອງເມືອງຂັ້ນເມືອງ ຈຶ່ງມີແຜນການດັ່ງນີ້:**

1. **ຈຸດປະສົງ:**
   - ເພື່ອເປັນການໂຄສະນາເຮັດໃຫ້ປະຊາຊົນຊາວເມືອງປາກງື່ມ ແລະ ທົ່ວສັງຄົມໄດ້ຮັບຮູ້ ເຂົ້າໃຈ ແລະ ເຫັນໄດ້ເຖິງໝາກຜົນຂອງການປົກປັກຮັກສາ ແລະ ສ້າງສາພັດທະນາເມືອງປາກງື່ມ; ໂດຍສະເພາະຜ່ານການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ. ເວົ້າລວມ ເວົ້າສະເພາະແມ່ນການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ແລະ ແຜນພັດທະນາເສດຖະກິດສັງຄົມຂອງຂັ້ນເມືອງ, ຂັ້ນນະຄອນຫຼວງວຽງຈັນ ແລະ ຂັ້ນສູນກາງໃນແຕ່ໄລຍະ.
   - ເປັນການສ້າງຂະບວນການຕ້ອນຮັບວັນສຳຄັນຕ່າງໆຂອງຊາດຂອງພັກທີ່ຈະມາເຖິງນີ້ເຊັ່ນ: ວັນຊາດ (**2/12/1975-2/12/2024**) ຄົບຮອບ **49** ປີ, ວັນສ້າງຕັ້ງພັກ (**22/3/1955-22/03/2024**) ຄົບຮອບ **69** ປີ, ວັນຄ້າຍວັນເກີດປະທານໄກສອນ ພົມວິຫານ (**13/12/1920-13/12/2024**) ຄົບຮອອບ **104** ປີ, ກອງປະຊຸມໃຫຍ່ຄັ້ງທີ **VI** ຂອງອົງຄະນະພັກເມືອງ, ກອງປະຊຸມໃຫຍ່ ຄັ້ງທີ **VIII** ອົງຄະນະພັກນະຄອນຫຼວງວຽງຈັນ ແລະ ກອງປະຊຸມໃຫຍ່ ຄັ້ງທີ **XII** ຂອງສູນກາງພັກ ໃຫ້ມີບັນຍາກາດຟົດຟື້ນ
2. **ຄາດໝາຍ.**
   - ເພື່ອໄວ້ເປັນຫຼັກຖານແຫຼ່ງຂໍ້ມູນທາງດ້ານຄວາມຮູ້ໃຫ້ແກ່ລຸ່ນລູກຫຼານຜູ້ເກີດໃໝ່ໃຫຍ່ລຸນໄດ້ສຶກສາຮໍ່າຮຽນກ່ຽວກັບປະຫວັດສາດຄວາມເປັນມາຂອງເມືອງປາກງື່ມ ນັບແຕ່ກ່ອນ ແລະ ຫຼັງປົດປ່ອຍປະເທດຊາດຈົນຮອດປະຈຸບັນ.
   - ເພື່ອເປັນການປຸກລະດົມໃຫ້ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດປະຊາຊົນຊາວ ເມືອງປາກງື່ມມີຈິດໃຈຮັກຊາດ, ຮັກບ້ານເກີດເມືອງນອນຂອງຕົນແລ້ວເປັນເຈົ້າການປະກອບສ່ວນເຂົ້າໃນການເຄົາລົບຕໍ່ລະບຽບກົດໝາຍ ແລະ ປະຕິບັດ ສອງໜ້າທີ່ຍຸດທະສາດຂອງພັກຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດບ້ານເມືອງໃຫ້ມີຄວາມຈະເລີນກ້າວໜ້າ.

- ເພື່ອເຮັດໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນຊາວ ເມືອງປາກງື່ມ ພ້ອມພາກັນເປັນຈິດໜຶ່ງໃຈດຽວກັນ ຫັນໜ້າເຂົ້າມາສ້າງຜົນງານ ເພື່ອຕ້ອນຮັບກອງຊຸມປະໃຫຍ່ **3** ຂັ້ນ ແລະ ວັນສຳຄັນຕ່າງໆຂອງຊາດຂອງພັກ ໃນປີ **2025.**

**3. ແຜນວຽກຈຸດສຸມ.**

**ແຜນວຽກຈຸດສຸມແມ່ນມີຢູ່ 4 ກິດຈະກາໃຫຍ່ຕົ້ນຕໍຄື:**

**1) ແຜນວຽກຂຽນປະຫວັດເມືອງປາກງື່ມ**

- ໃຫ້ອະນຸກຳມະການແບ່ງວຽກກັນໃຫ້ຮັບຜິດຊອບລະອຽດແຕ່ຫົວທີ ໃນນີ້, ໃຫ້ມີທີມງານປະຈຳຜູ້ຂຽນຕົວຈິງ, ມີທີມງານເກັບກຳຂໍ້ມູນຢູ່ພາຍໃນເມືອງ ແລະ ນະຄອນຫຼວງວຽງຈັນ ແລະ ທີມງານສະໜອງຂໍ້ມູນຢູ່ ແຕ່ລະຫ້ອງການ;
- ຄາດຄະເນຕົ້ນເດືອນ **12/2024** ໃຫ້ໄດ້ຜ່ານຄະນະຮັບຜິດຊອບຂັ້ນນະຄອນຫຼວງປັບປຸງເບິ່ງຊ່ວຍ.

**2) ແຜນວຽກປະກາດວັດຖຸ່ນຊ້ອຍ**

- ມອບໃຫ້ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນໃຈກາງໃນການກະກຽມເອກະສານຕ່າງໆທາງດ້ານພື້ນຖານໃຫ້ສຳເລັດໃນທ້າຍເດືອນ **10/2024**;
- ຈັດກອງປະຊຸມຮ່ວມຂັ້ນເມືອງ ແລະ ພະແນກ ເພື່ອຄົ້ນຄວ້າພິທີການ ແລະ ຂັ້ນຕອນໃຫ້ລະອຽດ ຫຼື ນຳສະເໜີເຂົ້າຜ່ານກອງປະຊຸມເຈົ້າຄອງ, ຮອງເຈົ້າຄອງມີທິດຊີ້ນຳເລີຍຈຶ່ງໄວ;
- ຄາດຄະເນທ້າຍເດືອນ **11/2024** ໃຫ້ໄດ້ຈັດພິທີປະກາດ.

**3) ກິດຈະກຳເມືອງພົ້ນທຸກ.**

- ມອບໃຫ້ຫ້ອງການກະສິກຳ-ປ່າໄມ້ເມືອງ ເປັນໃຈກາງກວດກາຄືນບ້ານ ແລະ ຄອບຄົວທີ່ຍັງບໍ່ບັນລຸຕາມດຳລັດ **348**/ລບ, ລົງວັນທີ **16** ພະຈິກ **2017** ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຖານພັດທະນາ. ເພື່ອໃຫ້ຮູ້ສາຍເຫດແຕ່ລະບ້ານ, ແຕ່ລະຄອບຄົວຈະແຈ້ງ ແລະ ຊອກວິທີການແກ້ໄຂຮ່ວມກັນກັບພະແນກລັກແນ່, ຄາດຄະເນກາງເດືອນ **12/2024** ໃຫ້ໄດ້ຈັດພິທີປະກາດ.

**4) ກິດຈະກຳປະກາດຮັບເອົາແຜນຜັງຕົວເມືອງ.**

- ມອບໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ເປັນເຈົ້າການປະສານກັບພະແນກຈັດກອງປະຊຸມຄົ້ນຄວ້າປຶກສາຫາລືກັນລັກແນ່;
- ກະກຽມເອກະສານກ່ຽວຂ້ອງຕ່າງໆ ເພື່ອນຳສະເໜີຜ່ານເຈົ້າຄອງ;
- ສະເໜີຜ່ານກອງປະຊຸມສະພາປະຊາຊົນນະຄອນຫຼວງວຽງຈັນຮັບຮອງ;
- ຄາດຄະເນທ້າຍເດືອນ **1** ຫາ ຕົ້ນເດືອນ ຫາ **2** ເດືອນ/**2025** ໃຫ້ໄດ້ຈັດພິທີປະກາດ.

ນອກຈາກ **4** ກິດຈະກຳຫຼັກນີ້ແລ້ວກໍ່ຍັງມີແຜນວຽກກະກຽມກອງປະຊຸມໃຫຍ່ຄັ້ງທີ **VI** ຂອງອົງຄະນະພັກເມືອງ, ຕິດພັນກັບຫັນພະນັກງານລົງກໍ່ສ້າງຮາກຖານການເມືອງ ແລະ ການປະຕິບັດໜ້າທີ່ວິຊາສະເພາະແຕ່ລະຂະແໜງການເປັນວຽກປົກອ້ອມ.

**4. ວິທີການຈັດຕັ້ງປະຕິບັດ.**

- ແຕ່ລະກິດຈະກຳໃຫ້ແຕ່ງຕັ້ງຄະນະຮັບຜິດຊອບ ແບ່ງວຽກກັນໃຫ້ລະອຽດຈະແຈ້ງ;
- ສ້າງແຜນວຽກ, ແຜນຄົນ, ແຜນເງິນ ໃຫ້ລະອຽດແຕ່ລະກິດຈະກຳ ແລ້ວເອົາໃຈໃສ່ຕິດຕາມ, ຊຸກຍູ້ ແລະກວດກາເປັນແຕ່ລະໄລຍະ ຢ່າງໃກ້ສິດຕິດແທດເປັນປົກກະຕິ;
- ຊຸກຍູ້ຢ່າງແຂງແຮງໃນການປຸກລະດົມຂົນຂວາຍພະນັກງານ, ສະມາຊິກພັກ, ທະຫານ, ຕຳຫຼວດ, ນັກທຸລະກິດຊາວຄ້າຂາຍ ແລະ ປະຊາຊົນ ທຸກຊັ້ນຄົນຢູ່ພາຍໃນເມືອງ ແລະ ທົ່ວສັງຄົມ ໃຫ້ມີຄວາມ

ສາມັກຄີເປັນຈິດໜຶ່ງໃຈດຽວກັນປະກອບສ່ວນທາງດ້ານວັດຖຸ ແລະ ເຫຼືອແຮງເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ໃຫ້ສຳເລັດ ແລະ ທັນຕາມກຳນົດເວລາ.

- ຖືເອົາຂະບວນການຈັດຕັ້ງປະຕິບັດແຕ່ລະກິດຈະກຳ ເພື່ອເປັນການສ້າງພື້ນງານເພື່ອປະກອບສ່ວນ ແລະ ຕ້ອນຮັບກອງປະຊຸມໃຫຍ່ຄັ້ງທີ **VI** ຂອງອົງຄະນະພັກເມືອງ, ຄັ້ງທີ **VIII** ອົງຄະນະພັກ ນະຄອນຫຼວງວຽງຈັນ, ຄັ້ງທີ **XII** ຂອງສູນກາງພັກໂດຍຕິດພັນກັບການປະຕິບັດຂໍ້ແຂ່ງຂັນຂອງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ແລະ ອື່ນໆ ໃຫ້ມີເນື້ອໃນຄວາມໝາຍຢ່າງເລິກເຊິ່ງ.
- ຈັດກອງປະຊຸມຮ່ວມລະຫວ່າງເມືອງກັບພະແນກການທີ່ກ່ຽວຂ້ອງຂັ້ນ ນະຄອນຫຼວງວຽງຈັນ ທີ່ພົວພັນແຕ່ລະກິດຈະກຳ, ພ້ອມທັງລາຍງານ ແລະ ຂໍທິດຊີ້ນຳຈາກທ່ານເຈົ້າຄອງ ແລະ ການນຳຂັ້ນ ນະຄອນຫຼວງວຽງຈັນ.

**5. ມາດຕະການຈັດຕັ້ງປະຕິບັດ.**

- ມອບໃຫ້ຄະນະປະຈຳພັກ, ຄະນະພັກ, ຫົວໜ້າກອງບັນຊາການ, ຫົວໜ້າຫ້ອງການ ຕະຫຼອດຮອດເລຂາພັກກຸ່ມ ແລະ ນາຍບ້ານ ໃຫ້ຖືເປັນຄວາມຮັບຜິດຊອບຂອງຕົນຕໍ່ໜ້າທີ່ການເມືອງ, ເປັນເຈົ້າການສຶກສາອົບຮົມທາງດ້ານການເມືອງແນວຄິດຕໍ່ພະນັກງານ ແລະ ປະຊາຊົນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ, ໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເຖິງຖອງເພື່ອປະກອບສ່ວນຢ່າງເປັນຂະບວນການຟົດຟື້ນ.
- ມອບໃຫ້ຄະນະຮັບຜິດຊອບແຕ່ລະກິດຈະກຳ ນຳເອົາແຜນການດັ່ງກ່າວໄປຈັດຕັ້ງຜັນຂະຫຍາຍເປັນໜ້າວຽກອັນລະອຽດຂອງຕົນເອງ ເພື່ອຮັບປະກັນໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້;
- ມອບໃຫ້ບັນດາສະຫາຍຄະນະປະຈຳພັກເມືອງ ເປັນເຈົ້າການຕິດຕາມ, ກວດກາການຈັດຕັ້ງປະຕິບັດແຕ່ລະກິດຈະກຳໃຫ້ເປັນຂະບວນການຟົດຟື້ນ, ຖືເອົາຂະບວນການນີ້, ຕິດພັນກັບການສ້າງຂະບວນການຕ້ອນຮັບກອງປະຊຸມໃຫຍ່ຄັ້ງທີ VI ຂອງເມືອງ, ພ້ອມທັງເປັນການທົດສອບທາງດ້ານຄວາມຮັບຮູ້, ຄວາມຮັບຜິດຊອບ, ຄວາມບຸກບືນຫ້າວຫັນຕໍ່ການຈັດຕັ້ງປະຕິບັດໜ້າທີ່; ແລ້ວຄັດເລືອກໃຫ້ໄດ້ບຸກຄະລາກອນທີ່ມີເງື່ອນໄຂ, ມາດຖານດີເດັ່ນ ແລະ ຄົບຖ້ວນລົງສະໝັກເປັນຄະນະພັກເມືອງ ຊຸດທີ **VI** ນີ້.

**ຫົວໜ້າຄະນະຮັບຜິດຊອບ**

ຄຳໝູນ ຕຽງທະລາດ